*Journal of Science and Teacher Education (JLSTE), 2*(2), 85-95
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

# ຄວາມສາມາດໃນການຕີຄວາມໝາຍບົດເລື່ອງ ໂດຍການນຳໃຊ້ເຕັກນິກສະແດງບົດບາດສົມມຸດເຂົ້າໃນການຮຽນວິຊາ ວັນນະຄະດີ ຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີ 2 ສົກຮຽນ 2025-2026

*ຄູນມີ ພົມມະນີວົງ*, ສີດາວັນ ວົງເຊໂດນ ແລະ ເພັດລາຕີ ອິນທະດາລົມ*

*ພາກວິຊາສ້າງຄູພາສາລາວ-ວັນນະຄະດີ, ວິທະຍາໄລຄູສະຫວັນນະເຂດ*

## *ບົດຄັດຫຍໍ້*

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາກ່ຽວກັບການພັດທະນາທັກສະການຕີຄວາມໝາຍບົດເລື່ອງ “ນາງມະໂລງ ທ້າວບາຈຽງ” ແລະ ເລື່ອງ “ກຳພ້າຜີນ້ອຍ” ໂດຍສະເພາະເພື່ອປຽບທຽບຜົນການຮຽນທັກສະການຕີຄວາມໝາຍບົດເລື່ອງ ແລະ ຄວາມເພິ່ງພໍໃຈຂອງນັກສຶກສາຄູຕໍ່ກັບບົດຮຽນ. ຊ່ວຍແກ້ໄຂບັນຫາການອ່ານຕີຄວາມໝາຍໃນວິຊາວັນນະຄະດີລາວໃຫ້ດີຂຶ້ນ. ກຸ່ມຕົວຢ່າງໃນການດຳເນີນການວິໄຈໃນຄັ້ງນີ້ແມ່ນນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ວິທະຍາໄລຄູສະຫວັນນະເຂດຈຳນວນ 14 ຄົນ ຍິງ 9 ຄົນ. ກຸ່ມຜູ້ວິໄຈໄດ້ໃຊ້ບົດທົດສອບກ່ອນການສອນໃຫ້ນັກສຶກສາໃນກຸ່ມເປົ້າໝາຍໃນການຕີຄວາມໝາຍບົດເລື່ອງ. ຫຼັງຈາກນັ້ນ; ຄູໄດ້ນຳເອົາບົດທົດສອບການສອນໃຫ້ນັກສຶກສາໃນກຸ່ມເປົ້າໝາຍຫຼັງຈາກທີ່ໄດ້ຮຽນດ້ວຍຮູບແບບການສະແດງບົດບາດສົມມຸດ. ຫຼັງຈາກນັ້ນ, ກຸ່ມຜູ້ວິໄຈ ນຳເອົາຄະແນນຜົນການປະເມີນທັງກ່ອນ ແລະ ຫຼັງຮຽນ ມາປຽບທຽບເບິ່ງຄວາມກ້າວໜ້າຂອງນັກຮຽນ. ຜົນການວິໄຈພົບວ່ານັກສຶກສາມີການພັດທະນາທັກສະການຕີຄວາມໝາຍບົດເລື່ອງຫຼາຍຂຶ້ນ, ອ່ານບົດເລື່ອງແລ້ວສາມາດບອກເນື້ອໃນຄວາມໝາຍເລື່ອງໄດ້ຖືກຕ້ອງ (ຄະແນນກ່ອນສອນສະເລ່ຍ $\bar{X} = 4,92$ ຄະແນນຫຼັງການສອນສະເລ່ຍ $\bar{X} = 7.92$). ການສອນຂອງຄູໃນວິຊາວັນນະຄະດີກ່ຽວກັບການຕີຄວາມໝາຍບົດເລື່ອງ ໂດຍໃຊ້ວິທີການສອນແບບສະແດງບົດບາດສົມມຸດແມ່ນໄດ້ຮັບຜົນດີເຮັດໃຫ້ນັກສຶກສາມີການພັດທະນາດ້ານການຕີຄວາມໝາຍບົດເລື່ອງດີຂຶ້ນ.

***ຄຳສັບສຳຄັນ:*** *ການຕີຄວາມໝາຍ, ບົດບາດສົມມຸດ, ການສອນວັນນະຄະດີ, ການສຶກສາຄູ*

**ຕິດຕໍ່ພົວພັນ: ຄູນມີ ພົມມະນີວົງ; ໂທ: 020 55863564;*
*ອີເມວ: phommanevong k@gmail.com*

**ຂໍ້ມູນບົດຄວາມ**
Received 22 April 2026
Received in revised form 16 May 2026
Accepted 22 May 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

# Enhancing Text Interpretation Skills through Role-Playing Techniques among Second-Year Lao Language and Literature Teacher Students in the 2025–2026 Academic Year

*Khounmy Phommanevong*, Sydavanh Vongsedonh and Phetlaty Inthadaline*
*Department of Lao Language and Literature, Savannakhet Teacher Training College*

## Abstract

This study aimed to examine the effectiveness of role-playing techniques in developing text interpretation skills among second-year Lao Language and Literature teacher students at Savannakhet Teacher Training College during the 2025–2026 academic year. The study focused on the literary texts *Nang Malong Thao Bachieng* and *Kampa Phinoy*. The participants consisted of 14 second-year students, including 9 females. A one-group pretest–posttest design was employed. Students' text interpretation skills were assessed before and after instruction using role-playing techniques, and the results were compared to determine learning progress. The findings revealed a significant improvement in students' text interpretation skills following the intervention. The mean pretest score was 4.92, while the mean posttest score increased to 7.92. The higher posttest scores indicate that role-playing techniques effectively enhanced students' understanding and interpretation of literary texts. Students demonstrated improved ability to identify meanings, analyze story content, and communicate interpretations accurately. In addition to improving interpretation skills, the role-playing approach promoted student engagement, cooperation, responsibility, critical thinking, and active participation in learning. The findings support learner-centered teaching principles and suggest that role-playing techniques can be an effective instructional strategy for teaching literature and developing text interpretation skills among teacher education students.

***Keywords:*** *Role-playing technique, Text interpretation, Literature teaching, Teacher education.*

**ARTICLE INFO**

**Correspondence: Khounmy Phommanevong; Tel: 020 55863564;*

*Email: phommanevong.k@gmail.com*

Received 22 April 2026
Received in revised form 16 May 2026
Accepted 22 May 2026

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ວິຊາວັນນະຄະດີເປັນວິຊາໜຶ່ງທີ່ມີຄວາມສຳຄັນຫຼາຍ ໂດຍສະເພາະເຮັດໃຫ້ຄົນເຮົາສຶກສາຮຽນຮູ້ບັນດາບົດເລື່ອງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາໝູນໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນ ເຮັດໃຫ້ຄົນເຮົາມີຄວາມຮູ້ຄວາມສາມາດ ມີຄຸນສົມບັດສິນທຳປະຕິວັດ ມີນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນຂອງຕົນ. ວິທີການສອນໝາຍເຖິງຂະບວນການຕ່າງໆ ທີ່ຜູ້ສອນໃຊ້ໃນການຈັດກິດຈະກຳການຮຽນ-ການສອນ ເພື່ອໃຫ້ຜູ້ຮຽນເກີດການຮຽນຮູ້ຕາມຈຸດປະສົງທີ່ກຳນົດໄວ້ ເຊິ່ງການສອນໃນເມື່ອກ່ອນສ່ວນຫຼາຍເປັນການສອນແບບບັນລະຍາຍ ສອນໂດຍໃຫ້ນັກສຶກສາອ່ານບົດເລື່ອງ ເອງ ແລ້ວມາຕີຄວາມໝາຍຂອງບົດເລື່ອງ, ວິເຄາະເລື່ອງ ເຫັນວ່າການສອນແບບນີ້ບໍ່ໄດ້ຮັບຜົນເທົ່າທີ່ຄວນ ຈຶ່ງປັບປ່ຽນການຮຽນການສອນ ມາສອນໂດຍການນຳໃຊ້ການສອນແບບສະແດງບົດບາດສົມມຸດໃຫ້ນັກສຶກສາ.

ການຈັດການຮຽນການສອນວັນນະຄະດີ ກໍແມ່ນປັດໄຈໜຶ່ງທີ່ສຳຄັນເຊິ່ງນອນໃນຫຼັກສູດການສ້າງຄູໃນສາຍຄູມັດທະຍົມ ເຊິ່ງມີຈຸດປະສົງໃຫ້ນັກສຶກສາຄູ ເຂົ້າໃຈກ່ຽວກັບການສອນທັກສະການຕີຄວາມໝາຍບົດເລື່ອງໃນວັນນະຄະດີ ໂດຍສະເພາະ ແມ່ນການສອນກ່ຽວກັບການຕີຄວາມໝາຍບົດເລື່ອງໂດຍຜ່ານການອ່ານ ການວິເຄາະເນື້ອໃນບົດເລື່ອງ ແລະ ການວິເຄາະຕົວລະຄອນເຊິ່ງລ້ວນແລ້ວແຕ່ແມ່ນທັກສະທີ່ເປັນພື້ນຖານຂອງການສອນວັນນະຄະດີ.

ກິດຈະກຳບົດບາດສົມມຸດເປັນກິດຈະກຳການຮຽນການສອນຮູບແບບໜຶ່ງທີ່ນິຍົມມາໃຊ້ໃນການຮຽນການສອນໃນວິຊາວັນນະຄະດີມຸ້ງເນັ້ນ ແລະ ເປີດໂອກາດໃຫ້ຜູ້ຮຽນໄດ້ໃຊ້ບຸກຄະລິກກະຕຸ້ນໃຫ້ຜູ້ຮຽນສາມາດໃຊ້ທັກສະການຕີຕີຄວາມໝາຍໃນການສະແດງພຶດຕິກຳຕາມບົດບາດທີ່ໄດ້ຮັບຈາກສະຖານະການທີ່ໃກ້ຄຽງຄວາມເປັນຈິງອາດຄວບຄຸມ ຫຼື ບໍ່ຄວບຄຸມກໍ່ໄດ້ຂຶ້ນກັບຄວາມສາມາດຂອງຜູ້ຮຽນເຊິ່ງມີຈຸດໝາຍສຳຄັນຄືໃຫ້ຜູ້ຮຽນໄດ້ໃຊ້ຄຳເວົ້າຕົນເອງຫຼາຍກວ່າຄຳເວົ້າໃນບົດເລື່ອງແຕ່ໃຫ້ຢູ່ໃນຂອບເຂດ ນອກຈາກນັ້ນ ຍັງເປັນກິດຈະກຳທີ່ຊ່ວຍກະຕຸ້ນໃຫ້ຜູ້ຮຽນສາມາດໃຊ້ຄຳເວົ້າສື່ຄວາມໝາຍໄດ້ເໝາະສົມກັບສະພາບທາງສັງຄົມ ເພາະຜູ້ຮຽນສາມາດສວມບົດບາດທີ່ຜູ້ຮຽນມີໂອກາດໄປປະຍຸກໃຊ້ໃນຊີວິດໄດ້ເຊັ່ນ: ກິດຈະກຳເລົ່ານິທານໃນຊັ້ນຮຽນ,

*Journal of Science and Teacher Education (JLSTE), 2(2), 85-95*
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

ການໃຊ້ກິດຈະກຳບົດບາດສົມມຸດໃນຊັ້ນຮຽນເປັນຕົ້ນ ບົດບາດສົມມຸດເປັນເຄື່ອງມື ແລະ ວິທີການຢ່າງໜຶ່ງທີ່ໃຊໃນການສອນ ເພື່ອໃຫ້ຜູ້ຮຽນເຂົ້າໃຈຢ່າງເລິກເຊິ່ງໃນເລື່ອງທີ່ຮຽນ ໂດຍໃຫ້ຜູ້ສອນສ້າງສະພາບການສົມມຸດຂຶ້ນມາໃຫ້ຜູ້ຮຽນໄດ້ສະແດງອອກຕາມທີ່ຄົ້ນຄິດວ່າຄວນຈະເປັນ ແລະ ຖືເອົາການສະແດງອອກທັງຄວາມຮູ້ສຶກ ແລະ ພຶດຕິກຳມາຂໍອະພິປາຍ ເພື່ອການຮຽນຮູ້ກິດຈະກຳທີ່ໃຊ້ບົດບາດສົມມຸດເປັນເທັກນິກທີ່ຜູ້ຮຽນໄດ້ສະແດງພຶດຕິກຳ ໂດຍສວມບົດບາດທີ່ອາດຖືກກຳນົດໄວ້ ຫຼື ເປັນສະຖານະການຈຳລອງເຮັດໃຫ້ຜູ້ຮຽນສາມາດສະແດງອອກທາງດ້ານຄວາມຄິດ, ລັກສະນະທ່າທາງອີກທັງເປັນການພັດທະນາທັກສະການເວົ້າ ໂດຍທີ່ຜູ້ຮຽນສາມາດນຳຄວາມຮູ້ດ້ານຄຳສັບ ຫຼື ເກີດຈິນຕະນາການທີ່ຈະນຳຮູບແບບດ້ານພາສາໃຊ້ເພື່ອການສື່ສານຕາມສະຖານະການທີ່ໄດ້ຮັບບົດບາດໄດ້ຢ່າງມີປະສິດທິພາບ (ທິສະນາ ແຂມມະນີ 2519/1976, ໜ້າ 41, ອ້າງເຖິງໃນ ດວງສະໝອນ ຈັນທັບ 2550/2007, ໜ້າ 32).

ນອກຈາກນີ້ແລ້ວ ໃນການຮຽນອັນນະຄະດີ ຍັງຈະຮຽນດ້ວຍການຮຽນແບບສະແດງທ່າທາງຈິນຕະນາການລວມທັງຄວາມຈຳ, ອາລົມ, ຄວາມຮູ້ສຶກ, ມີຄວາມມັກທີ່ມີຕໍ່ບົດບາດ ເປັນກິດຈະກຳທີ່ ອີກຢ່າງໜຶ່ງການສອນຕ່ອງມີຂັ້ນຕອນທີ 1 ກຳນົດບັນຫາ: ຜູ້ສອນຕ້ອງຄຳນຶງເຖິງຄວາມຕ້ອງການຮຽນຮູ້ຫຍັງຈາກການສະແດງ ບົດບາດສົມມຸດນັ້ນໆ. ຂັ້ນຕອນທີ 1 ກຳນົດບັນຫາ: ຜູ້ສອນຕ້ອງຄຳນຶງເຖິງຄວາມຕ້ອງການຮຽນຮູ້ຫຍັງຈາກການສະແດງ ບົດບາດສົມມຸດນັ້ນໆ; ຂັ້ນຕອນທີ 2 ສ້າງສະພາບການໃນການສະແດງບົດບາດສົມມຸດ ຜູ້ສອນຕ້ອງອອກແບບສະພາບການ ໃຫ້ແທດເໝາະກັບຈຸດປະສົງທີ່ຄົນຢາກບັນລຸຜົນ; ຂັ້ນຕອນທີ 3 ກຳນົດບົດບາດ ແລະ ຄັດເລືອກເອົາຜູ້ເຂົ້າຮ່ວມ. ຜູ້ສອນຕ້ອງວາງບົດບາດຜູ້ທີ່ເຂົ້າຮ່ວມ ຫຼື ຜູ້ຖືກຄັດເລືອກຢ່າງຈະແຈ້ງ; ຂັ້ນຕອນທີ 4 ສະເໜີບົດການສະແດງ ຜູ້ສອນຕ້ອງສະເໜີ ຫຼື ອະທິບາຍ ຈຸດປະສົງຂອງການສະແດງບົດບາດສົມມຸດ ເພື່ອໃຫ້ໄດ້ທັກສະ, ຄວາມຮູ້, ຄວາມເຂົ້າໃຈ ແລະ ຄວາມຄາດຫວັງທີ່ຈະໄດ້ຮັບຈາກການປະຕິບັດ ກິດຈະກຳ; ຂັ້ນຕອນທີ 5 ລົງມປະຕິບັດ ຫຼື ສະແດງຕາມການກຳນົດໄວ້: ຜູ້ຮຽນຕ້ອງສະແດງພາກສ່ວນຂອງ ເຂົາເຈົ້າຮັບຜິດຊອບຕາມບົດຍາດທີ່ກຳນົດ ຫຼື ຕົກລົງກັນ ແລະ ສະແດງຕາມສະພາບການທີ່ຜູ້ສອນໄດ້ກຳນົດໄວ້ໃຫ້; ຂັ້ນຕອນທີ 6 ວິເຄາະ, ສະຫຼຸບ ແລະ ປະເມີນຜົນ ຜູ້ສອນ ແລະ ຜູ້ຂຽນຕ້ອງວິເຄາະ, ສະຣູບ ແລະ ປະ ເມີນຜົນວ່າການສະແດງວ່າ (ກ) ມີຫຍັງເກີດຂຶ້ນ, (K) ເປັນຫຍັງມັນຈຶ່ງເກີດຂຶ້ນແບບນັ້ນ? ມີຄວາມຮູ້ສຶກ ແລະ ມີແຮງຈູງໃຈທີ່ກ່ຽວຂ້ອງໃດແດ່? (3) ມີການປ່ຽນແປງອັນໃດທີ່ຈະສ້າງຜົນໄດ້ຮັບ ອື່ນໆ.

ສະນັ້ນ; ກຸ່ມຜູ້ສຶກສາຈຶ່ງໄດ້ຄົ້ນຄວ້າ ແລະ ສຶກສາເບິ່ງບົດວິໄຈຫຼາຍຮູບແບບ ເຫັນວ່າການຮຽນການສອນໃນຮູບແບບການຕີຄວາມໝາຍບົດເລື່ອງໂດຍນຳໃຊ້ວິທີການສອນ ໂດຍນຳໃຊ້ການສະແດງບົດບາດສົມມຸດ ສຳລັບນັກສຶກສາປີທີ 2 ລະບົບ 12+4 ສາຍພາສາລາວ-ວັນນະຄະດີ ວິທະຍາໄລຄູສະຫວັນນະເຂດ. ເປັນຮູບແບບທີ່ມີການຈັດກຸ່ມ, ມີການວາງໜ້າທີ່ຮັບຜິດຊອບລະອຽດ, ມີການເພິ່ງພາຊ່ວຍເຫຼືອກັນ, ມີການປັບປຸງຜົນງານ, ມີການໃຫ້ລາງວັນສຳລັບຜູ້ທີ່ເຮັດຜົນງານດີທີ່ສຸດ ແລະ ມີການຍ້ອງຍໍຊົມເຊີຍ.

ຈາກເຫດຜົນດັ່ງກ່າວ ກຸ່ມຜູ້ຄົ້ນຄວ້າຈຶ່ງໄດ້ສຶກສາການຮຽນຮ່ວມໂດຍໃຊ້ຮູບແບບການຕີຄວາມໝາຍບົດເລື່ອງ ໂດຍນຳໃຊ້ການສະແດງບົດບາດສົມມຸດ ສຳລັບນັກສຶກສາປີທີ 2 ລະບົບ 12+4 ສາຍພາສາລາວ-ວັນນະຄະດີ ວິທະຍາໄລຄູສະຫວັນນະເຂດ ເຂົ້າໃນການຈັດການຮຽນການສອນ ວິຊາ ວັນນະຄະດີ ເພາະການຮຽນການສອນໃນຮູບແບບນີ້ ແມ່ນເປັນຮູບແບບການຮຽນທີ່ໃຫ້ນັກຮຽນແຕ່ລະຄົນມີສ່ວນຮ່ວມ, ມີການແບ່ງກຸ່ມເໝາະສົມກັບສະພາບຕົວຈິງ, ມີການແບ່ງໜ້າວຽກລະອຽດ ແລະ ສາມາດຕີຄວາມໝາຍຂອງບົດເລື່ອງທີ່ອ່ານໄດ້.

ດ້ວຍເຫດນີ້ ຜູ້ວິໄຈຈຶ່ງໄດ້ເບິ່ງເຫັນເຖິງຄວາມສຳຄັນຂອງບັນຫາດັ່ງກ່າວ ຈຶ່ງເຫັນວ່າການພັດທະນາທັກສະການຕີຄວາມໝາຍບົດເລື່ອງຂອງນັກສຶກສາມີຄວາມຈຳເປັນຕອ້ງນຳກິດຈະກຳບົດບາດສົມມຸດໃຊ້ໃນການຈັດການຮຽນຮູ້ ດັ່ງນັ້ນ ຜູ້ວິໄຈຈຶ່ງນຳເຕັກນິກການສອນໂດຍການໃຊ້ກິດຈະກຳບົດບາດສົມມຸດມາໃຊ້ໃນການຈັດການຮຽນການສອນ ເພື່ອພັດທະນາທັກສະການຕີຄວາມໝາຍບົດເລື່ອງໃນວິຊາວັນນະຄະດີຂອງນັກສຶກສາປີທີ 2 ລະບົບ 12+4 ສາຍພາສາລາວ-ວັນນະຄະດີ ວິທະຍາໄລຄູສະຫວັນນະເຂດ ທັງນີ້ ເພື່ອສົ່ງເສີມຄວາມກ້າສະແດງອອກຄວາມເຊື່ອໝັ້ນໃນຕົນເອງຕະຫຼອດຈົນຍົກລະດັບຄວາມສາມາດດ້ານທັກສະການຕີຄວາມໝາຍບົດເລື່ອງຂອງນັກສຶກສາໃຫ້ດີ ແລະ ມີປະສິດທິພາບຫຼາຍຍິ່ງຂຶ້ນ.

*1.2. ຄຳຖາມຂອງການຄົ້ນຄ້ວາ*

1. ຄວາມສາມາດໃນການຕີຄວາມໝາຍບົດເລື່ອງ ຂອງນັກສຶກສາຄູ ພາສາລາວ-ວັນນະຄະດີ ປີທີ 2 ໂດຍໃຊ້ເຕັກນິກສະແດງບົດບາດສົມມຸດ ຫຼັງຮຽນສູງກວ່າກ່ອນການຮຽນ ຫຼື ບໍ?

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

2. ນັກສຶກສາຄູມີຄວາມເພິ່ງພໍໃຈຕໍ່ບົດຮຽນ ໂດຍໃຊ້ເຕັກນິກສະແດງບົດບາດສົມມຸດ ໃນການຕີຄວາມໝາຍບົດເລື່ອງ ຢູ່ໃນລະດັບໃດ?

*1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອປຽບທຽບຄວາມສາມາດໃນການຕີຄວາມໝາຍບົດເລື່ອງກ່ອນ-ຫຼັງຮຽນ ໂດຍໃຊ້ເຕັກນິກສະແດງບົດບາດສົມມຸດ ຂອງນັກສຶກສາຄູ ພາສາລາວ-ວັນນະຄະດີ ປີທີ 2.

2. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ທີ່ມີຕໍ່ບົດຮຽນ ໂດຍໃຊ້ເຕັກນິກສະແດງບົດບາດສົມມຸດ ເພື່ອພັດທະນາຄວາມສາມາດໃນການຕີຄວາມໝາຍບົດເລື່ອງ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

*2.1 ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການຕີຄວາມໝາຍບົດເລື່ອງ*

ຜູ້ສຶກສາໄດ້ລວບລວມບົດວິທະຍານິພົນ ແລະ ບົດວິໄຈທີ່ກ່ຽວຂ້ອງກັບຄວາມສາມາດຂອງນັກສຶກສາໃນການຕີຄວາມໝາຍບົດເລື່ອງ ພົບວ່າມີບົດວິທະຍານິພົນບົດວິໄຈກ່ຽວກັບຄວາມສາມາດຂອງນັກສຶກສາໃນການຕີຄວາມໝາຍບົດເລື່ອງດັ່ງນີ້:

ພັດສະລິນທອນ ອະນັນສີຣິວັດ (2547, ໜ້າ 13) ໄດ້ໃຫ້ຄວາມໝາຍຂອງການອ່ານຕີຄວາມໝາຍວ່າ ການແປຄວາມໝາຍຂໍ້ຄວາມ ຖ້ອຍຄຳສຳນວນທີ່ຜູ້ຂຽນອາດຈະເຈດຕະນາແອບແຝງ ຫຼື ຊ້ອນໄວ້ຄວາມ ໝາຍລະດັບເລິກ ດ້ວຍພົນບາງປະການເຊິ່ງຫາກອ່ານແປຄວາມໝາຍພຽງຜິວເຜີນຜູ້ອ່ານຫາກເບິ່ງບໍ່ເຫັນ ຫຼື ບໍ່ເຂົ້າໃຈສານທີ່ຜູ້ຂຽນຕ້ອງການສື່ຢ່າງຖືກຕ້ອງ ການອ່ານໜັງສືບາງປະເພດຈຳເປັນຕ້ອງການຕີຄວາມໝາຍໃຫ້ແຈ້ງເສຍກ່ອນຈຶ່ງຈະເຂົ້າໃຈເນື້ອໃນຂອງສານທີ່ຜູ້ຂຽນຕ້ອງການສື່ຢ່າງແທ້ຈິງ ເນື່ອງຈາກຖ້ອຍຄຳໃນພາສາລາວນັ້ນຄຳບາງຄຳມີທັງຄວາມໝາຍໂດຍກົງ ແລະ ຄວາມໝາຍເລິກແຝງຢູ່ ຜູ້ອ່ານຈຶ່ງຈຳເປັນຕ້ອງມີຄວາມຮູ້ກ່ຽວກັບຄວາມໝາຍຂອງຄຳນັ້ນໆ ແລະ ວິເຄາະໄດ້ວ່າໃນບໍລິບົດໃດຄວນຈະໃຊ້ຄວາມໝາຍກົງ ຫຼື ຄວາມໝາຍເລິກ.

ວັນພາ ນະສີວົມອນ (1998, ໜ້າ 5) ໄດ້ໃຫ້ຄວາມໝາຍຂອງການອ່ານຕີຄວາມວ່າ ການອ່ານຕີຄວາມໝາຍຜູ້ອ່ານຈະຕ້ອງພະຍາຍາມທຳຄວາມເຂົ້າໃຈກ່ຽວກັບເນື້ອຫາສາລະຂອງເລື່ອງເຊິ່ງໄດ້ແກ່ ເນື້ອເລື່ອງ ຫຼື ແນວຄິດ ນ້ຳສຽງຂອງຜູ້ຂຽນ ຕະຫຼອດຈົນຈຸດປະສົງອື່ນໆ ຂອງຜູ້ຂຽນທີ່ແອບແຝງຢູ່ໃນບົດຂຽນນັ້ນໆ ເພື່ອຈະໄດ້ເຂົ້າໃຈເຈດຕະນາທີ່ແທ້ຈິງຂອງຜູ້ຂຽນ ແຕ່ແນວໃດກໍ່ຕາມການອ່ານຕີຄວາມໝາຍບໍ່ແມ່ນວ່າຈະຕີຄວາມ ໝາຍຕາມຄວາມຄິດຂອງຕົນເອງໂດຍບໍ່ສົນໃຈເນື້ອໃນ ແລະ ບໍລິບົດທີ່ກ່ຽວຂ້ອງກັບເລື່ອງທີ່ອ່ານ ແຕ່ການອ່ານຕີຄວາມໝາຍຕ້ອງອາໄສບໍລິບົດຂອງເນື້ອໃນທີ່ອ່ານເປັນແນວທາງໃນການຕີຄວາມໝາຍດ້ວຍ.

Choihiran and Buasomboon (2021) ໄດ້ສຶກສາການພັດທະນາຮູບແບບການຮຽນຮູ້ເພື່ອສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາລະດັບປະລິຍາບັນດິດໂດຍໃຊ້ RUCES MOEDL. ຜົນການສຶກສາພົບວ່າ:

1. ຮູບແບບການສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິໄດ້ໃຊ້ RUCES MOEDL ປະກອບດ້ວຍ 4 ອົງປະກອບໄດ້ແກ່ 1) ຫຼັກການແນວຄິດທັກສະພື້ນໂດຍກຳນົດດ້ວຍຜູ້ພັດທະນາຮູບແບບ. 2) ວັດຖຸປະສົງ. 3) ກິດຈະກຳການຮຽນການສອນ ເຊິ່ງປະກອບດ້ວຍຮູບແບບກິດຈະກຳການຮຽນຮູ້ ເຊິ່ງມີຂະບວນການຮຽນຮູ້ 5 ຂັ້ນຕອນ ໄດ້ແກ່ ຂັ້ນທີ 1. ທົບທວນວັນນະສົນ, ຂັ້ນທີ 2 ຍົນຍົນເນື້ອຫາ, ຂັ້ນທີ 3. ນຳພາຄວາມຄິດ, ຂັ້ນທີ 4. ພິນິດຣີຄຳ, ຂັ້ນທີ 5. ສະຫຼຸບທຳຄວາມເຂົ້າໃຈ. 4) ການປະເມີນຜົນ.

2. ປະສິດທິຜົນຂອງຮູບແບບທີ່ເປັນຜົນມາຈາກການທົດລອງໃຊ້ຮູບແບບການຮຽນຮູ້ພົບວ່າ

2.1. ຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິດທີ່ຮຽນຮູ້ດ້ວຍຮູບແບບການຮຽນຮູ້ໂດຍໃຊ້ RUCES MOEDL ຫຼັງການທົດລອງສູງກວ່າກ່ອນການທົດລອງຢ່າງມີຄວາມສຳຄັນທາງສະຖິຕິລະດັບ 05.

2.2. ຄວາມເພິ່ງພໍໃຈຂອງນັກສຶກສາປະລິນຍາບັນດິດທີ່ມີຕໍ່ຮູບແບບການຮຽນຮູ້ ເພື່ອສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິດໂດຍໃຊ້ RUCES MOEDL ພົບວ່ານັກສຶກສາມີຄວາມເພິ່ງພໍໃຈຕໍ່ຮູບແບບການຮຽນຮູ້ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ.

ຣັກຕາພາ ທະນາວຣນິດ (2006) ໄດ້ສະເໜີບົດສາລະນິພົນເລື່ອງ:ການພັດທະນາໂມດູນການຮຽນວິຊາພາສາໄທ ເລື່ອງການອ່ານຕີຄວາມໝາຍຂອງນັກຮຽນຊັ້ນມັດທະຍົມສຶກສາ ປີທີ 4 ໂຮງຮຽນຍໍແຊບອຸປະຖົມ ອຳເພີສາມະພຣານ ຈັ່ງຫວັດນະຄອນປະຖົມ.

ຜົນການວິໄຈ ພົບວ່າ ນັກຮຽນມີຄວາມສາມາດໃນການອ່ານຕີຄວາມໝາຍວິຊາພາສາໄທຫຼັງການຮຽນສູງກວ່າກ່ອນການຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 01.

ຝົນດາ ຟູ່ຈີບ (2018, ໜ້າ 1) ໄດ້ສະເໜີວິທະຍານິພົນເລື່ອງ: ບັນຫາການໃຊ້ການຕີຄວາມໝາຍກົດໝາຍອາຍາ, ຜົນການວິໄຈພົບວ່າ ຄວາມຜິດຖານວິ່ງຣາວທັບມີຄວາມມຸ່ງໝາຍເພື່ອຄຸ້ມຄອງກຳມະສິດ ແລະ ການຄອບຄອງລວມໄປເຖິງຄວາມບໍ່ຢຳເກງຕໍ່ເຈົ້າໜ້າທີ່ ເຊິ່ງຢູ່ໃກ້ສິດກັບເຈົ້າໜ້າທີ່ນັ້ນດ້ວຍເປັນການຄຸ້ມຄອງຕົວບຸກຄົນ ຈາກຄວາມຢ້ານກົວ ເຊິ່ງໄດ້ຮັບຈາກການກະທຳທີ່ອິງອາດ ແລະ ຈາກໄພອັນຕະລາຍທີ່ອາດເກີດຂຶ້ນຈາກການກະທຳທີ່ໃກ້ສິດກັບຕົນ ເຊິ່ງອາດໄປສູ່ການກະທຳຄວາມຜິດອື່ນຕໍ່ໄດ້ງ່າຍ ດັ່ງນັ້ນໃນການຕີຄວາມໝາຍຜິດຖານວິ່ງຣາວທັບນອກຈາກຈະຕ້ອງຕີຄວາມໝາຍ ເພື່ອຄຸ້ມຄອງຕົວທັບແລ້ວຍັງຕ້ອງຕີຄວາມເພື່ອຄຸ້ມຄອງຕົວບຸກຄົນເຈົ້າທຣັພຍດ້ວຍ.

*2.2 ບົດຄົ້ນຄວ້າທີ່ກ່ຽວຂ້ອງກັບການສະແດງບົດບາດສົມມຸດ*

*Journal of Science and Teacher Education (JLSTE), 2*(2), 85-95
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

Sophon and Thongsorn (2023) ໄດ້ສຶກສາຜົນການຈັດການຮຽນຮູ້ໂດຍໃຊ້ກິດຈະກຳບົດບາດສົມມຸດຮ່ວມກັບການຮຽນແບບຮ່ວມມືເທັກນິກເພື່ອນຊ່ວຍເພື່ອນທີ່ມີຕໍ່ຜົນສຳຜັດທາງການຮຽນ ທັກສະການສື່ສານ ແລະ ເຈຕະຄະຕິຕໍ່ການຮຽນວິຊາພາສາຍີ່ປຸ່ນຂອງນັກຮຽນຊັ້ນມັດທະຍົມປີທີ 3. ຜົນວິໄຈພົບວ່າ:

1. ຜົນສຳຜັດທາງການຮຽນພາສາຍີ່ປຸ່ນ ຂອງນັກຮຽນຊັ້ນມັດທະຍົມປີທີ 3 ທີ່ໄດ້ຮັບການຈັດການຮຽນຮູ້ໂດຍໃຊ້ການສະແດງບົດບາດສົມມຸດຮ່ວມກັບຮຽນຮູ້ແບບຮ່ວມມືເທັກນິກເພື່ອນຊ່ວຍເພື່ອນຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.5.

2. ທັກສະທາງສື່ສານພາສາຍີ່ປຸ່ນຂອງນັກຮຽນຊັ້ນມັດທະຍົມປີທີ 3 ໄດ້ຮັບການຈັດການຮຽນຮູ້ໂດຍໃຊ້ການສະແດງບົດບາດສົມມຸດຮ່ວມກັບຮຽນຮູ້ແບບຮ່ວມມືເທັກນິກເພື່ອນຊ່ວຍເພື່ອນຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.5.

3. ເຈຕະຄະຕິຕໍ່ການຮຽນພາສາຍີ່ປຸ່ນຂອງນັກຮຽນຊັ້ນມັດທະຍົມປີທີ 3 ທີ່ໄດ້ຮັບການຈັດການຮຽນຮູ້ໂດຍໃຊ້ການສະແດງບົດບາດສົມມຸດຮ່ວມກັບຮຽນຮູ້ແບບຮ່ວມມືເທັກນິກເພື່ອນຊ່ວຍເພື່ອນ ພາບລວມຢູ່ໃນຄະແນນສະເລ່ຍລະດັບດີ.

Bupphachat and Cheep-Aranai (2019) ໄດ້ສຶກສາການໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການເວົ້າພາສາອັງກິດ ເພື່ອການສື່ສານສຳຫຼັບນັກຮຽນຊັ້ນປະຖົມສຶກສາປີທີ 4 ໂຮງຮຽນບໍເຊບອຸຖຳ ອຳເພີສາມພຣານ ຈັ່ງຫວັດນະຄອນປະຖົມ. ຜົນການວິໄຈພົບວ່າ:

1. ທັກສະການເວົ້າພາສາອັງກິດເພື່ອການສື່ສານຫຼັງຮຽນ ໂດຍໃຊ້ກິດຈະກຳບົດບາດສົມມຸດສູງຂຶ້ນກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.5.

2. ນັກຮຽນມີຄວາມເພິ່ງພໍໃຈຕໍ່ບົດບາດສົມມຸດ ເພື່ອພັດນາທັກສະການເວົ້າພາສາອັງກິດ ເພື່ອການສື່ສານຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ (Mean:4,75 SD: 0,42)

Chantamat (2022) ໄດ້ສະເໜີວິໄຈເລື່ອງ: ການໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການເວົ້າພາສາຈີນຂອງນັກສຶກສາໂປຣແກຣມວິຊາການສອນພາສາຈີນ ຄະນະຄູສາມ ມະຫາວິທະຍາໄລລາສະພັກຊຽງລາຍ.ຜົນການວິໄຈພົບວ່າ:

1. ແຜນການຈັດການຮຽນຮູ້ການໃຊ້ກິດຈະກຳບົດບາດສົມມຸດມີສິດທິພາບເທົ່າກັບ 85,33/88.77 ເຊິ່ງສູງກວ່າເກນ 80/80.

2. ທັກສະເວົ້າພາສາຈີນຂອງນັກສຶກສາຫຼັງຮຽນໂດຍໃຊ້ກິດຈະກຳບົດບາດສົມມຸດຂອງນັກສຶກສາສູງກວ່າກອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.5.

3. ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຮຽນໂດຍໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາທັກສະການເວົ້າພາສາຈີນຢູ່ໃນລະດັບຫຼາຍທີ່ສຸດ.

## 3. ວິທີດຳເນີນການຄົ້ນຄວ້າ

*3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

*ກ. ປະຊາກອນ*

ແມ່ນນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ລວມມີ: 14 ຄົນ ຍິງ 09 ຄົນ.

*ຂ. ກຸ່ມຕົວຢ່າງ*

ການສຶກສາຄັ້ງນີ້ ເປັນການສຶກສາຈາກປະຊາກອນ ຫຼື ກຸ່ມເປົ້າໝາຍໂດຍກົງ ເນື່ອງຈາກວ່າປະຊາກອນມີຈຳນວນໜ້ອຍນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ຈຳນວນ 14 ຄົນ ຍິງ 09 ຄົນ ໄດ້ມາຈາກການເລືອກຕາມຄວາມເໝາະສົມ. ສາເຫດທີ່ເລືອກເອົານັກຮຽນຫ້ອງນີ້ເປັນກຸ່ມຕົວຢ່າງສຳລັບການວິໄຈ ກໍຍ້ອນວ່ານັກວິໄຈເປັນຄູສອນວິຊາວັນນະຄະດີລາວ ປະຈຳຢູ່ໃນຫ້ອງສະດວກໃນການດຳເນີນການວິໄຈ ເຊິ່ງນຳໃຊ້ທິດສະດີຂອງ ວັດນະພອນ ລະງັບທຸກ.

*3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ໃນການສຶກສາຄັ້ງນີ້ຜູ້ວິໄຈໄດ້ດຳເນີນການສ້າງເຄື່ອງມືຕາມຂັ້ນຕອນດັ່ງນີ້:

- ສຶກສາເອກະສານ ແລະ ລາຍງານວິໄຈທີ່ກ່ຽວຂ້ອງມາເປັນແນວທາງ.
- ສຶກສາສະພາບການຮຽນການສອນຂອງນັກສຶກສາໃນຫ້ອງປີທີ 2 ໃນໄລຍະລົງສອນຕົວຈິງ ເພື່ອນຳມາເປັນແນວທາງ.
- ການສ້າງບົດທົດສອບ ສະແດງຄວາມຄິດເຫັນ ແມ່ນດຳເນີນເອົາຕາມສະພາບການຮຽນການສອນ ໃນວິຊາວັນນະຄະດີລາວ ຂອງນັກສຶກສາຊັ້ນປີທີ 2.
- ບົດທົດສອບກ່ຽວກັບ "ການວິໄຈເລື່ອງ ຄວາມສາມາດໃນການຕີຄວາມໝາຍບົດເລື່ອງ ໂດຍການນຳໃຊ້ເຕັກນິກສະແດງບົດບາດສົມມຸດເຂົ້າໃນການຮຽນວິຊາວັນນະຄະດີ ຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີ 2 ສົກຮຽນ 2025-2026 ".

1. ແບບທົດສອບເພື່ອການວິໄຈ ສະບັບນີ້ໄດ້ສ້າງຂຶ້ນໂດຍມີຈຸດປະສົງເພື່ອສຶກສາ ຄວາມສາມາດໃນການຕີຄວາມໝາຍບົດເລື່ອງ ໂດຍການນຳໃຊ້ເຕັກນິກສະແດງບົດບາດສົມມຸດເຂົ້າໃນການຮຽນວິຊາວັນນະຄະດີ ຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີ 2 ສົກຮຽນ 2025-2026.
2. ແບບທົດສອບມີຄຳຖາມຈຳນວນ 20 ຂໍ້ ທຸກຂໍ້ຈະມີຂໍ້ມູນຈະຕ້ອງຕອບຢູ່ 1 ຄຳຕອບຂອງທ່ານຈະເກັບໄວ້ເປັນຄວາມລັບສຳລັບຜົນການວິໄຈ ຈະສະເໜີໃນພາບລວມ ໂດຍຈະບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ທ່ານ ແລະ ໜ່ວຍງານຂອງທ່ານແຕ່ປະການໃດ.
3. ແບບທົດສອບສະບັບນີ້ ແບ່ງອອກເປັນ 2 ຕອນດັ່ງນີ້:

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

**+ ຂັ້ນຕອນທີ 1:** ຂໍ້ມູນທົ່ວໄປຂອງຜູ້ຕອບແບບທົດສອບ (ຊື່ ແລະ ນາມສະກຸນ, ເພດ, ອາຍຸ, ຫ້ອງ).

**+ ຂັ້ນຕອນທີ 2:** ຄວາມເຂົ້າໃຈໃນການຕີຄວາມໝາຍບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ດ້ວຍການເຮັດບົດທົດສອບ ຈຳນວນ 20 ຂໍ້, ຂໍ້ລະ 0.5 ຄະແນນ ເພື່ອວັດຜົນຄວາມເຂົ້າໃຈຂອງນັກສຶກສາຕໍ່ການຕີຄວາມໝາຍບົດເລື່ອງ.

4. ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາ ແບ່ງອອກເປັນ 2 ຂັ້ນຕອນຄື:

**+ ຂັ້ນຕອນທີ 1:** ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ (ຊື່ ແລະ ນາມສະກຸນ, ເພດ, ອາຍຸ, ຫ້ອງ).

**+ ຂັ້ນຕອນທີ 2:** ຄວາມເພິ່ງພໍໃຈໃນການຕີຄວາມໝາຍບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ດ້ວຍການຕອບແບບສອບຖາມຄວາມເພິ່ງພໍໃຈໃນການສອນຕີຄວາມໝາຍບົດເລື່ອງດ້ວຍການສະແດງບົດບາດສົມມຸດ ຕາມປັດໃຈທີ່ເປັນຈິງ ມີລັກສະນະເປັນມາດຕະສ່ວນປະເມີນຄ່າ (Rating Scale) ມີ 5 ລະດັບຄື: ມີຄວາມຕ້ອງການຈຳເປັນໃນການຮຽນຕີຄວາມໝາຍບົດເລື່ອງໃນວິຊາວັນນະຄະດີລາວໃຫ້ນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ວິທະຍາໄລຄູສະຫວັນນະເຂດ. ຕາມປັດໃຈທີ່ເປັນຈິງດັ່ງນີ້ ໜ້ອຍສຸດ, ໜ້ອຍ, ປານກາງ, ຫຼາຍ, ຫຼາຍທີ່ສຸດ.

ຕາຕະລາງທີ 3: ເກນການຕີຄວາມໝາຍ

| ຄະແນນສະເລ່ຍ | ລະດັບຄວາມຄິດເຫັນ |
|---|---|
| 1.0 – 1.49 = 1 | ແມ່ນເພິ່ງພໍໃຈໜ້ອຍສຸດ |
| 1.50 – 2.49 = 2 | ແມ່ນເພິ່ງພໍໃຈໜ້ອຍ |
| 2.50 – 3.49 = 3 | ແມ່ນເພິ່ງພໍໃຈປານກາງ |
| 3.50 – 4.49 = 4 | ແມ່ນເພິ່ງພໍໃຈຫຼາຍ |
| 4.50 – 5.00 = 5 | ແມ່ນເພິ່ງພໍໃຈຫຼາຍທີ່ສຸດ |

*3.3 ວິທີເກັບກຳຂໍ້ມູນ*

ນັກວິໄຈໄດ້ເກັບກຳຂໍ້ມູນດ້ວຍວິທີການສັງເກດໃນການສອນ, ໃຊ້ແບບທົດສອບສັງລວມຄວາມຄິດເຫັນ, ໃຊ້ຕາຕະລາງບັນທຶກຂໍ້ມູນຕົວຈິງສຳລັບການວິເຄາະຂໍ້ມູນແລ້ວສົນທະນາເພື່ອຖອດຖອນບົດຮຽນພາຍໃນໜ່ວຍງານພາສາລາວ-ວັນນະຄະດີ ເພື່ອກຳນົດບັນຫາທີ່ເກີດຂຶ້ນຕໍ່ກັບການສອນວິເຄາະບົດເລື່ອງວິຊາວັນນະຄະດີລາວ ການວິໄຈໂດຍດຳເນີນໄປຕາມ 5 ບາດກ້າວຂອງການວິໄຈພາກປະຕິບັດ.

(ໃນວິຊາ ວັນນະຄະດີລາວ ທີ 21/11/2026 ແລະ ບົດທີ 6 ວັນທີ 28/11/2026) ໂດຍນັກວິໄຈເຂົ້າຮ່ວມເກັບກຳບັນຫາ.

ຜ່ານການປະເມີນກ່ອນ ແລະ ຫຼັງແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາພາຍໃນຫ້ອງຂາດຄວາມສົນໃຈເວລາທີ່ຄູໃຫ້ຕີຄວາມໝາຍບົດເລື່ອງວັນນະຄະດີລາວ ບໍ່ໄດ້ຕາມຈຸດປະສົງໃຫ້; ບາງບົດເລື່ອງວັນນະຄະດີລາວຍັງເປັນຄຳຮ້ອຍກອງ ຫຼື ກອນອ່ານສັງສອນສັງວາດ; ບົດເລື່ອງວັນນະຄະດີລາວ ຍັງມີຈຳນວນໜ້ອຍທີ່ໄດ້ຈັດພິມຂຶ້ນໃໝ່ (ສ່ວນໃຫຍ່ເປັນເລື່ອງເລົ່າປາກເປົ່າ ໂອກາດໃນການໄດ້ສຳພັດ ແລະ ທຳຄວາມເຂົ້າໃຈກ່ຽວກັບບົດເລື່ອງວັນນະຄະດີມີໜ້ອຍ); ບົດເລື່ອງວັນນະຄະດີລາວ ທີ່ນຳມາຮຽນຍັງເປັນເລື່ອງດັ້ງເດີມບໍ່ໄດ້ປະຍຸກ ບໍ່ໄດ້ນຳໄປສະແດງເປັນຮູບເງົາ, ວິດີໂອ, ສະແດງລະຄອນ ແລະ ສະແດງເທິງເວທີ; ນັກຮຽນ (ບໍ່ມີຄວາມມັກ) ຂາດການຄົ້ນຄວ້າ ບົດເລື່ອງວັນນະຄະດີລາວ. ຜ່ານການສັງເກດຈຶ່ງຖອດຖອນ ແລະ ຊອກເຫັນສາເຫດຕື່ມອີກຕາມການໄປສຳພາດນັກຮຽນປາກເປົ່າ ໂດຍຕັ້ງຫົວຂໍ້ວ່າ ຈະນຳໃຊ້ການຕີຄວາມໝາຍບົດເລື່ອງວັນນະຄະດີວິທີໃດທີ່ນັກສຶກສາຈະສົນໃຈ ແລະ ເຂົ້າໃຈໃນເວລາສອນ.

ດັ່ງນັ້ນ, ຈຶ່ງດຳເນີນການປະເມີນຫຼັງໃນຫ້ອງເປົ້າໝາຍ (ນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2) ໃນຊົ່ວໂມງຮຽນວິຊາວັນນະຄະດີລາວ ເຊິ່ງແມ່ນນັກວິໄຈເຂົ້າຮ່ວມປະເມີນ ແລະ ເກັບກຳພາບ.

5). ຕ້ອງມີແນວທາງໃນການປູກຈິດສຳນຶກໃຫ້ນັກສຶກສາ ນັກສຶກສາມີຄວາມຮັກ ມັກຮຽນບົດເລື່ອງວັນນະຄະດີລາວມາແຕ່ເບື້ອງຕົ້ນ.

6). ເປີດການແຂ່ງຂັນກ່ຽວກັບການຄົ້ນຄວ້າບົດເລື່ອງວັນນະຄະດີປະເພດຕ່າງໆ.

*3.4 ການວິເຄາະຂໍ້ມູ*

ຜູ້ວິໄຈວິເຄາະຂໍ້ມູນໂດຍ.ຈາກການສັງເກດ, ການປະເມີນກ່ອນ ແລະການປະເມີນຫຼັງ, ແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາໃນການຮຽນການສອນ ໃນກຸ່ມເປົ້າໝາຍສາມາດຕີລາຄາ ພຶດຕິກຳບັນຫາໃນການວິເຄາະບົດເລື່ອງໃນວິຊາວັນນະຄະດີລາວ ຂອງນັກສຶກສາ ດັ່ງນີ້:

*3.4.1. ສະຖິຕິພື້ນຖານ*

1) ເປີເຊັນ

- ສູດຄິດໄລ່ ການປະເມີນ ສຳລັບວິເຄາະຂໍ້ມູນດັ່ງນີ້:

$P = \frac{f \times 100}{n}$

$P =$ ເປີເຊັນ

$f =$ ຈຳນວນຜົນການປະເມີນນັກສຶກສາ

$n =$ ຈຳນວນນັກສຶກສາທັງໝົດທີ່ປະເມີນ

2) ຄ່າສະເລ່ຍ $\left(\overline{X}\right)$ (ສຸວິມົນ ຕິລະພານັນ, 2550:155)

ສູດ $$\overline{X} = \frac{\sum X}{N}$$

$\overline{X}$ ແທນ ຄະແນນສະເລ່ຍ

$\sum x$ ແທນ ຜົນລວມຂອງຄະແນນທັງໝົດ

$N$ ແທນ ຈຳນວນນັກສຶກສາໃນກຸ່ມທົດລອງ

3) ຄ່າຜັນປ່ຽນມາດຕະຖານ (Standard Deviation) (ບຸນຊົມ ສີສະອາດ, 2545, ໜ້າ 106)

*Journal of Science and Teacher Education (JLSTE), 2*(2), 85-95
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

ສູດ $S.D = \sqrt{\frac{\sum(X-\overline{X})^2}{N-1}}$

$S.D$ ແມ່ນ ຄ່າຜັນປ່ຽນມາດຕະຖານ

$X$ ແມ່ນ ຜົນບວກຂອງຄະແນນທັງໝົດ

$\overline{X}$ ແມ່ນ ຜົນບວກຂອງຄະແນນແຕ່ລະໂຕຂຶ້ນກຳລັງສອງ

$N$ ແມ່ນ ຈຳນວນນັກຮຽນທັງໝົດ

$\sum$ ແມ່ນ ຜົນລວມຂອງຄະແນນທັງໝົດ

## 4. ຜົນການຄົ້ນຄວ້າ

*4.1 ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ*

ການວິໄຈຄັ້ງນີ້ມີຜູ້ຕອບແບບສອບຖາມເປັນເພດຊາຍ 5 ຄົນ ກວມເອົາ 35.71% ແລະ ເພດຍິງ 9 ຄົນ ກວມເອົາ 64.28%. ໃນນັ້ນ ຜູ້ໃຫ້ຂໍ້ມູນອາຍຸ 20 ປີ ລົງມາ ມີ 8 ຄົນ ກວມເອົາ 57.14% ແລະ ມີອາຍຸ 21 – 25 ປີ ມີ 6 ຄົນ ກວມເອົາ 42.85%. ດັ່ງຕາຕະລາງທີ 4 ແລະ 5 ລຸ່ມນີ້.

ຕາຕະລາງທີ 4: ຕາຕະລາງກ່ຽວກັບເພດ

| ລຳດັບ | ເພດ | ຈຳນວນຄົນ | ຄິດເປັນເປີເຊັນ % |
|---|---|---|---|
| 1 | ຊາຍ | 5 | 35.71 |
| 2 | ຍິງ | 9 | 64.28 |
| ລວມ | | 14 | 100 |

ຕາຕະລາງທີ 5: ຕາຕະລາງກ່ຽວກັບອາຍຸ

| ລຳດັບ | ອາຍຸ | ຈຳນວນຄົນ | ຄິດເປັນເປີເຊັນ % |
|---|---|---|---|
| 1 | 17 ຫາ 20 ປີ | 8 | 57.14 |
| 2 | 21 ຫາ 25 ປີ | 6 | 42.85 |
| ລວມ | | 14 | 100 |

*4.2. ການປຽບທຽບ*

*4.1.1. ຜົນການວິໄຈຄັ້ງທີ I*

ໃນການດຳເນີນການວິໄຈຄັ້ງນີ້ ແມ່ນການປະເມີນການຮຽນການສອນ ກິດຈະກຳໃຫ້ນັກສຶກສາຕີຄວາມໝາຍບົດເລື່ອງ "ນາງ ມະໂລງ ທ້າວບາຈຽງ" ແລະ "ກາພ້າຜີນ້ອຍ" ດ້ວຍການສະແດງບົດບາດສົມມຸດ ຂອງນັກສຶກສາ. ເພື່ອຄົ້ນພົບແນວທາງການແກ້ໄຂບັນຫາເຮັດໃຫ້ນັກສຶກສາສົນໃຈເຂົ້າໃຈ ການຕີຄວາມໝາຍບົດເລື່ອງໃນວັນນະຄະດີລາວ ເຊິ່ງສະແດງໃຫ້ເຫັນວ່າ ຜົນການປະເມີນຂອງສຶກສາມີດັ່ງນີ້:

ອີງຕາມຂໍ້ມູນໃນການດຳເນີນການວິໄຈຄັ້ງນີ້ ຜ່ານການປະເມີນການຮຽນການສອນ ປະຕິບັດກິດຈະກຳໃຫ້ນັກສຶກສາກ່ຽວກັບການຕີຄວາມໝາຍບົດເລື່ອງ "ນາງ ມະໂລງ ທ້າວບາຈຽງ" ແລະ ເລື່ອງ "ກຳພ້າຜີນ້ອຍ" ສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກສຶກສາຄື: ນັກສຶກສາທີ່ໄດ້ຄະແນນກ່ອນການຮຽນ ຄືເລກທີ່ກວມເອົາສູງສຸດແມ່ນຄະແນນ 5 (ລະດັບປານກາງ) ມີຈຳນວນ 7 ຄົນ ເທົ່າກັບ 50%, ຖັດລົງມາລະດັບສອງແມ່ນຄະແນນຄະແນນ 4 (ລະດັບອ່ອນ) ມີຈຳນວນ 4 ຄົນ ເທົ່າກັບ 28.57% ແລະ ຖັດລົງມາອັນດັບສາມແມ່ນຄະແນນ 6 ມີຈຳນວນ 3 ຄົນ ເທົ່າກັບ 21.43% (ເບິ່ງຕາຕະລາງທີ 6).

ຕາຕະລາງທີ 6: ຄະແນນກ່ອນການສອນ

| ຄະແນນກ່ອນການຮຽນ | | |
|---|---|---|
| ຄະແນນ | ຈຳນວນຄົນ | ເປີເຊັນ |
| 1 | 0 | 0 |
| 2 | 0 | 0 |
| 3 | 0 | 0 |
| 4 | 4 | 28.57% |
| 5 | 7 | 0 |
| 6 | 3 | 21.43% |
| 7 | 0 | 50% |
| 8 | 0 | 0 |
| 9 | 0 | 0 |
| 10 | 0 | 0 |
| ລວມ | 14 | 100% |

*4.1.2. ຜົນການວິໄຈຄັ້ງທີ 2*

ອີງຕາມຂໍ້ມູນໃນການດຳເນີນການວິໄຈຄັ້ງນີ້ ຜ່ານການປະເມີນການຮຽນການສອນ ປະຕິບັດກິດຈະກຳໃຫ້ນັກສຶກສາກ່ຽວກັບການຕີຄວາມໝາຍບົດເລື່ອງ "ນາງ ມະໂລງ ທ້າວບາຈຽງ" ແລະ ເລື່ອງ "ກຳພ້າຜີນ້ອຍ" ສະແດງໃຫ້ເຫັນວ່າ ຜົນການປະເມີນຂອງນັກສຶກສາຄື: ນັກສຶກສາທີ່ໄດ້ຄະແນນຫຼັງການຮຽນ ຄືເລກທີ່ກວມເອົາສູງສຸດແມ່ນຄະແນນ 8 (ລະດັບດີ) ມີຈຳນວນ 7 ຄົນ ເທົ່າກັບ 50%, ຖັດລົງມາລະດັບສອງແມ່ນຄະແນນຄະແນນ 7 (ລະດັບດີ) ມີຈຳນວນ 4 ຄົນ ເທົ່າກັບ 28.57% ແລະ ຖັດລົງມາອັນດັບສາມແມ່ນຄະແນນ 9 (ລະດັບດີຫຼາຍ) ມີຈຳນວນ 3 ຄົນ ເທົ່າກັບ 21.43%.

ຕາຕະລາງທີ 7: ຕາຕະລາງບັນທຶກຄະແນນຫຼັງການຮຽນ

| ຄະແນນຫຼັງການຮຽນ | | |
|---|---|---|
| ຄະແນນ | ຈຳນວນຄົນ | ເປີເຊັນ |
| 1 | 0 | 0 |
| 2 | 0 | 0 |
| 3 | 0 | 0 |
| 4 | 0 | 0 |
| 5 | 0 | 0 |
| 6 | 0 | 10% |
| 7 | 4 | 28.57% |
| 8 | 7 | 50% |
| 9 | 3 | 21.43% |
| 10 | 0 | 0 |
| ລວມ | 14 | 100% |

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

ອີງຕາມຂໍ້ມູນໃນຕາຕະລາງທີ 8 ສະແດງໃຫ້ພວກເຮົາເຫັນວ່າຜົນໄດ້ຮັບກ່ອນການສອນ ຄະແນນສະເລ່ຍຂອງນັກສຶກສາທັງໝົດແມ່ນເທົ່າກັບ 4.92 ຄະແນນ (ລະດັບອ່ອນ) ແລະ ຫຼັງການສອນຄະແນນສະເລ່ຍແມ່ນ ເທົ່າກັບ 7.92 ຄະແນນ (ລະດັບດີ) ເຊິ່ງຄິດໄລ່ເປັນຄະແນນຄວາມກ້າວໜ້າຂອງນັກສຶກສາທັງໝົດສະເລ່ຍແມ່ນເທົ່າກັບ 3.00 ຄະແນນ ແລະ ສະເລ່ຍຄະແນນກ່ອນ ແລະ ຫຼັງຂອງນັກສຶກສາທັງໝົດແມ່ນເທົ່າກັບ 6.43 ຄະແນນ ແລະ ຄ່າຜັນປ່ຽນມາດຖານ (SD) ແມ່ນເທົ່າກັບ 0.73.

ຕາຕະລາງທີ 8: ຕາຕະລາງປຽບທຽບຄະແນນກ່ອນ ແລະ ຫຼັງການສອນ

| ລ/ດ | ນັກສຶກສາ | ຄະແນນກ່ອນ | ຄະແນນຫຼັງ | ຄວາມກ້າວໜ້າ | ຄ່າສະເລ່ຍ |
|---|---|---|---|---|---|
| 1 | ຜູ້ທີ 1 | 5 | 8 | 3 | 6.5 |
| 2 | ຜູ້ທີ 2 | 6 | 9 | 3 | 7.5 |
| 3 | ຜູ້ທີ 3 | 5 | 8 | 3 | 6.5 |
| 4 | ຜູ້ທີ 4 | 4 | 7 | 3 | 5.5 |
| 5 | ຜູ້ທີ 5 | 5 | 9 | 4 | 7 |
| 6 | ຜູ້ທີ 6 | 5 | 7 | 2 | 6 |
| 7 | ຜູ້ທີ 7 | 5 | 8 | 3 | 6.5 |
| 8 | ຜູ້ທີ 8 | 4 | 7 | 3 | 5.5 |
| 9 | ຜູ້ທີ 9 | 4 | 8 | 4 | 6 |
| 10 | ຜູ້ທີ 10 | 6 | 8 | 2 | 7 |
| 11 | ຜູ້ທີ 11 | 6 | 9 | 3 | 7.5 |
| 12 | ຜູ້ທີ 12 | 5 | 8 | 3 | 6.5 |
| 13 | ຜູ້ທີ 13 | 4 | 7 | 3 | 5.5 |
| 14 | ຜູ້ທີ 14 | 5 | 8 | 3 | 6.5 |
| ຄະແນນສະເລ່ຍ | | 4.92 | 7.92 | 3.00 | 6.43 |
| SD | | 0.73 | 0.73 | 3.00 | 6.43 |

ຜົນການຕອບແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາສາ ພົບດັ່ງນີ້:

*4.1.3. ຄວາມເພິ່ງພໍໃຈດ້ານເນື້ອໃນ*

ສະແດງໃຫ້ເຫັນວ່າ ຈຳນວນທີ່ເປັນຜົນກະທົບໃນການສອນຕີຄວາມໝາຍບົດເລື່ອງໃນວິຊາອັນນະຄະດີລາວຂອງນັກສຶກສາຄູພາສາລາວ-ວັນນະຄະດີກ່ຽວກັບຄວາມເພິ່ງພໍໃຈດ້ານເນື້ອໃນຄື: 1) ເນື້ອໃນທີ່ຮຽນເປັນເລື່ອງທີ່ຊັບຊ້ອນ ແມ່ນມີຄວາມເພິ່ງພໍໃຈຫຼາຍ ກວມເອົາຄະແນນສູງສຸດ (ຄະແນນ 4) ມີຈຳນວນ 7 ຄົນ ເທົ່າກັບ 50%, ຖັດລົງມາອັນດັບສອງແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ (ຄະແນນ 5) ມີຈຳນວນ 6 ຄົນ ເທົ່າກັບ 42.85%, ຖັດລົງມາອັນດັບທີສາມແມ່ນມີຄວາມພໍໃຈປານກາງ (ຄະແນນ 3) ມີຈຳນວນ 1 ຄົນ ເທົ່າກັບ 7.14%; 2) ເນື້ອໃນທີ່ຮຽນບໍ່ຍາກເກີນໄປ ແລະ ບໍ່ງ່າຍເກີນໄປ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 11 ຄົນ ເທົ່າກັບ 78.57%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 3 ຄົນ ເທົ່າກັບ 21.42%; 3) ເນື້ອໃນທີ່ຮຽນເປັນເລື່ອງທີ່ກ່ຽວຂ້ອງກັບຊີວິດປະຈຳວັນ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 8 ຄົນ ເທົ່າກັບ 51.14%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 6 ຄົນ ເທົ່າກັບ 42.85%;
4) ເນື້ອໃນທີ່ຮຽນແມ່ນລຽງລຳດັບແຕ່ງ່າຍໄປຫາຍາກ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 13 ຄົນ ເທົ່າກັບ 92.85%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 1 ຄົນ ເທົ່າກັບ 7.1%; 5) ເນື້ອໃນທີ່ຮຽນແມ່ນລຽງລຳດັບແຕ່ງ່າຍໄປຫາຍາກ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 14 ຄົນ ເທົ່າກັບ

*4.1.4 ຄວາມເພິ່ງພໍໃຈດ້ານກິດຈະກຳການຮຽນການສອນ*

ສະແດງໃຫ້ເຫັນວ່າ ຈຳນວນທີ່ເປັນຜົນກະທົບໃນການສອນຕີຄວາມໝາຍບົດເລື່ອງໃນວິຊາວັນນະຄະດີລາວຂອງນັກສຶກສາຄູພາສາລາວ-ວັນນະຄະດີກ່ຽວກັບຄວາມເພິ່ງພໍໃຈດ້ານກິດຈະກຳການຮຽນ-ການສອນຄື: 1) ມັກຮຽນວິຊາວັນນະຄະດີເປັນກຸ່ມກັບໝູ່ເພື່ອນ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 12 ຄົນ ເທົ່າກັບ 85.71%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 2 ຄົນ ເທົ່າກັບ 14.28%; 2) ເວລາເຮັດກິດຈະກຳມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 14 ຄົນ ເທົ່າກັບ 100%; 3) ມີໂອກາດໄດ້ສະແດງຄວາມຄິດເຫັນ ແລະ ໄດ້ລົງມືປະຕິບັດແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 13 ຄົນ ເທົ່າກັບ 92.85%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 1 ຄົນ ເທົ່າກັບ 7.14%; 4) ມີການແລກປ່ຽນຄວາມຮູ້ພາຍໃນກຸ່ມ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 14 ຄົນ ເທົ່າກັບ 100%; 5) ຄູຈັດບັນຍາກາດທີ່ກະຕຸ້ນ ແລະ ເສີມແຮງໃຫ້ຜູ້ຮຽນເກີດການຮຽນຮູ້ ແມ່ນມີຄວາມເພິ່ງພໍໃຈຫຼາຍທີ່ສຸດ ກວມເອົາຄະແນນສູງສຸດ (ຄະແນນ 5) ມີຈຳນວນ 13 ຄົນ ເທົ່າກັບ 92.85%, ຖັດລົງມາແມ່ນມີຄວາມເພິ່ງພໍໃຈຫຼາຍ (ຄະແນນ 4) ມີຈຳນວນ 1 ຄົນ ເທົ່າກັບ 7.14%.

## 5.ອະພິປາຍຜົນ

ຄວາມສາມາດດ້ານການອ່ານຕີຄວາມໝາຍບົດເລື່ອງ ຂອງນັກສຶກສາຄູພາສາລາວ-ວັນນະຄະດີ ປີ 2 ວິຊາ ວັນນະຄະດີ ໂດຍນຳໃຊ້ເຕັກນິກສະແດງບົດບາດສົມມຸດເຂົ້າໃນການຮຽນວິຊາວັນນະຄະດີສາມາດອະພິປາຜົນໄດ້ດັ່ງນີ້:

*Journal of Science and Teacher Education (JLSTE), 2*(2), 85-95
P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

1. ຜົນການປຽບທຽບຄວາມສາມາດໃນການຕີຄວາມໝາຍບົດເລື່ອງ ກ່ອນ-ຫຼັງຮຽນ ໂດຍໃຊ້ເຕັກນິກສະແດງບົດບາດສົມມຸດ ສູງກວ່າການຮຽນຢ່າງມີຄວາມສຳຄັນທາງສະຖິຕິລະດັບສູນ 5 ເຊິ່ງສອດຄ່ອງກັບສົມມຸດຖານທີ່ຕັ້ງໄວ້ ເມື່ອວິເຄາະຄ່າສະເລ່ຍດ້ວຍ SD = 6,43 ຈຶ່ງກ່າວໄດ້ວ່າກ່ອນຮຽນ ແລະ ຫຼັງຮຽນມີຄວາມແຕກຕ່າງກັນຄື ຄະແນນຫຼັງຮຽນມີຄວາມສູງກວ່າກ່ອນຮຽນ ເຊິ່ງສະແດງໃຫ້ເຫັນວ່າການໃຊ້ກິດຈະກຳບົດບາດສົມມຸດຊ່ວຍພັດທະນາຜົນສຳເລັດຂອງຜູຮຽນໃຫ້ສູງຂຶ້ນ ທັງນີ້ເພາະການໃຊ້ກິດຈະກຳບົດບາດສົມມຸດສົ່ງເສີມໃຫ້ຜູ້ຮຽນໄດ້ມີສ່ວນຮ່ວມ ແລະ ເນັ້ນຜູ້ຮຽນເປັນສຳຄັນ ຜູ້ຮຽນເກີດຄວາມກ້າເຮັດກ້າສະແດງອອກມີຄວາມໝັ້ນໃຈໃນການຕີຄວາມໝາຍ ເກີດຄວາມເຂົ້າໃຈໃນການຮຽນຮູ້ເລື່ອງລາວ ຫຼື ສະຖານະການຕ່າງໆໄດ້ເປັນຢ່າງດີ ເນື່ອງຈາກຜູ້ຮຽນໄດ້ມີໂອກາດປະຕິບັດຈິງ ແລະໃຊ້ສະຖານະການໃກ້ຄຽງກັບຊີວິດປະຈຳວັນ ເຊິ່ງຜົນເຮັດໃຫ້ຜົນການຮຽນຂອງຜູ້ຮຽນດີຕາມໄປດ້ວຍ. ນອກຈາກນີ້ຜູ້ວິໄຈຍັງຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ ເພາະຜູ້ຮຽນແຕ່ລະຄົນມີຄວາມສາມາດໃນການຮັບຮູ້ທີ່ແຕກຕ່າງກັນ ຜູ້ວິໄຈຈຶ່ງໃຊ້ກິດຈະກຳບົດບາດສົມມຸດມາພັດທະນາການຕີຄວາມໝາຍບົດເລື່ອງຂອງນັກສຶກສາ ເພື່ອໃຫ້ນັກສຶກສາບໍ່ເບື່ອໜ່າຍ ແລະ ສາມາດຮຽນຮູ້ໄດ້ຢ່າງເທົ່າທຽມກັນ ຊ່ວຍສ້າງແຮງຈູງໃຈໃຫ້ແກ່ນັກສຶກສາໃນການຕີຄວາມໝາຍບົດເລື່ອງ ອີກທັງຍັງທ້າທາຍໃຫ້ນັກສຶກສາຕີຄວາມໝາຍບົດເລື່ອງສະເໝີ ເພາະຕ້ອງຕີຄວາມໝາຍຕະຫຼອດການເຮັດກິດຈະກຳບົດບາດສົມມຸດ ເຮັດໃຫ້ນັກສຶກສາມີຄວາມໝັ້ນໃຈ ແລະ ກ້າທີ່ຈະສະແດງອອກ ເຊິ່ງສອດຄ່ອງກັບ Chantamat (2022) ໄດ້ກ່າວໄວ້ວ່າ ການຈັດກິດຈະກຳການຮຽນຮູ້ແບບຕາມການສະແດງບົດບາດສົມມຸດເຮັດໃຫ້ບົດຮຽນມີຄວາມສະໜຸກສະໜານເພີດເພີນ ດຶງດູດຄວາມສົນໃຈ ແລະ ເຮັດໃຫ້ຜູ້ຮຽນເກີດການຮຽນຮູ້ຫຼາຍດ້ານ ແລະ ມີສ່ວນຮ່ວມໃນການຮຽນຮູ້ສົ່ງເສີມໃຫ້ຜູ້ຮຽນກ້າສະແດງຄວາມສາມາດ ແລະ ຍັງສອດຄ່ອງກັບ ວັນພາ ນະສີວິມອນ (1998, ໜ້າ 5) ໄດ້ໃຫ້ຄວາມໝາຍຂອງການອ່ານຕີຄວາມວ່າ ການອ່ານຕີຄວາມໝາຍຜູ້ອ່ານຈະຕ້ອງພະຍາຍາມທຳຄວາມເຂົ້າໃຈກ່ຽວກັບເນື້ອຫາສາລະຂອງເລື່ອງເຊິ່ງໄດ້ແກ່ ເນື້ອເລື່ອງ ຫຼື ແນວຄິດ ນ້ຳສຽງຂອງຜູ້ຂຽນ ຕະຫຼອດຈົນຈຸດປະສົງອື່ນໆ ຂອງຜູ້ຂຽນທີ່ແອບແຝງຢູ່ໃນບົດຂຽນນັ້ນໆ ເພື່ອຈະໄດ້ເຂົ້າໃຈເຈດຕະນາທີ່ແທ້ຈິງຂອງຜູ້ຂຽນ ແຕ່ແນວໃດກໍ່ຕາມການອ່ານຕີຄວາມໝາຍບໍ່ແມ່ນວ່າຈະຕີຄວາມ ໝາຍຕາມຄວາມຄິດຂອງຕົນເອງໂດຍບໍ່ສົນໃຈເນື້ອໃນ ແລະ ບໍລິບົດທີ່ກ່ຽວຂ້ອງກັບເລື່ອງທີ່ອ່ານ ແຕ່ການອ່ານຕີຄວາມໝາຍຕ້ອງອາໄສບໍລິບົດຂອງເນື້ອໃນທີ່ອ່ານເປັນແນວທາງໃນການຕີຄວາມໝາຍດ້ວຍ. ດັ່ງນັ້ນ ຜູ້ຮຽນຄວນໄດ້ຮັບການຝຶກຝົນຢ່າງພຽງພໍທີ່ຈະສາມາດສືຄວາມໝາຍໄດ້ຢ່າງຖືກຕ້ອງເໝາະສົມ ໂດຍສະເພາະຢ່າງຍິ່ງການຈັດກິດຈະກຳການຮຽນການສອນໃນປັດຈຸບັນສົ່ງເສີມໃຫ້ຜູ້ຮຽນໄດ້ຮຽນຮູ້ໄດ້ເຂົ້າໃຈໄດ້ດ້ວຍຕົນເອງ ໂດຍເນັ້ນກິດຈະກຳໃຫ້ຜູ້ຮຽນມີສ່ວນຮ່ວມ ແລະ ເນັ້ນຜູ້ຮຽນເປັນສູນກາງ ການສອນໂດຍໃຊ້ການສະແດງບົດບາດສົມມຸດ ເປັນອີກວິທີສອນໜຶ່ງທີ່ຈະໃຫ້ຜູ້ຮຽນມີສ່ວນຮ່ວມໃນການຮຽນສົ່ງເສີມໃຫ້ຜູ້ຮຽນເກີດການຮຽນຮູ້ ແລະ ເກີດຄວາມສະໜຸກສະໜານເພີດເພີນ.

2. ນັກສຶກສາມີຄວາມເພິງພໍໃຈຕໍ່ການໃຊ້ກິດຈະກຳບົດບາດສົມມຸດ ເພື່ອພັດທະນາຄວາມສາມາດໃນການຕີຄວາມໝາຍບົດເລື່ອງ.ໃນລະດັບຫຼາຍທີ່ສຸດ ເຫັນວ່ານັກສຶກສາມີການພັດທະນາທັກສະການຕີຄວາມໝາຍບົດເລື່ອງ. ມີຄວາມເຂົ້າໃຈເລື່ອງຫຼາຍຂຶ້ນ, ອ່ານບົດເລື່ອງແລ້ວສາມາດບອກເນື້ອໃນຄວາມໝາຍເລື່ອງໄດ້ຖືກຕ້ອງ ເຊິ່ງມັນສະແດງອອກໃນ ຄະແນນການເຮັດບົດທົດສອບທັງ 2 ຄັ້ງຂອງນັກສຶກສາ. ຄະແນນກ່ອນສອບສະເລ່ຍ $\bar{X}$ = 4,92 ຄະແນນຫຼັງການສອບສະເລ່ຍ $\bar{X}$ = 7.92 ເມື່ອປຽບທຽບກັນແລ້ວຜົນຄະແນນ ຫຼັງການສອບ ແມ່ນສູງກວ່າກ່ອນການຮຽນ. ຜົນຄະແນນດີຂຶ້ນ ແລະ ສູງຂຶ້ນຈົນເປັນໜ້າເພິງພໍໃຈ ຫຼາຍເຖິງຫຼາຍທີ່ສຸດ. ການສອນຂອງຄູໃນວິຊາວັນນະຄະດີກ່ຽວກັບການຕີຄວາມໝາຍບົດເລື່ອງ ໂດຍໃຊ້ວິທີການສອນແບບສະແດງບົດບາດສົມມຸດແມ່ນໄດ້ຮັບຜົນດີເຮັດໃຫ້ນັກສຶກສາມີການພັດທະນາດ້ານການຕີຄວາມໝາຍບົດເລື່ອງດີຂຶ້ນ ເຊິ່ງສອດຄ່ອງກັບ ພັດສະລິນທອນ ອະນັນສິຣິວັດ (2547) ໄດ້ກ່າວໄວ້ວ່າການອ່ານຕີຄວາມໝາຍວ່າ ການແປຄວາມໝາຍຂໍ້ຄວາມຖ້ອຍຄຳສຳນວນທີ່ຜູ້ຂຽນອາດຈະເຈດຕະນາແອບແຝງ ຫຼື ຊ້ອນໄວ້ຄວາມ ໝາຍລະດັບເລິກ ດ້ວຍຜົນບາງປະການ ເຊິ່ງຫາກອ່ານແປຄວາມໝາຍພຽງຜິວເຜີນຜູ້ອ່ານຫາກເບິ່ງບໍ່ເຫັນ ຫຼື ບໍ່ເຂົ້າໃຈສານທີ່ຜູ້ຂຽນຕ້ອງການສື່ຢ່າງຖືກຕ້ອງ ການອ່ານໜັງສືບາງປະເພດຈຳເປັນຕ້ອງການຕີຄວາມໝາຍໃຫ້ແຈ້ງເສຍກ່ອນຈຶ່ງຈະເຂົ້າໃຈເນື້ອໃນຂອງສານທີ່ຜູ້ຂຽນຕ້ອງການສື່ຢ່າງແທ້ຈິງ ເນື່ອງຈາກຖ້ອຍຄຳໃນພາສາລາວນັ້ນຄຳບາງຄຳມີທັງຄວາມໝາຍໂດຍກົງ ແລະ ຄວາມໝາຍເລິກແຝງຢູ່ ຜູ້ອ່ານຈຶ່ງຈຳເປັນຕ້ອງມີຄວາມຮູ້ກ່ຽວກັບຄວາມໝາຍຂອງຄຳນັ້ນໆ ແລະ ວິເຄາະໄດ້ວ່າໃນບໍລິບົດໃດຄວນຈະໃຊ້ຄວາມໝາຍກົງ ຫຼື ຄວາມໝາຍເລິກ.ເຊິ່ງສອດຄ່ອງກັບ Choihiran and Buasomboon (2021) ໄດ້ສະເໜີວິທະຍານິພົນ ເລື່ອງ: ການພັດທະນາຮູບແບບການຮຽນຮູ້ເພື່ອສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາລະດັບປະລິຍາບັນດິດໂດຍໃຊ້ RUCES MOEDL. ຜົນການສຶກສາພົບວ່າ:

3. ຮູບແບບການສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິດໄດ້ໃຊ້ RUCES MOEDL ປະກອບດ້ວຍ 4 ອົງປະກອບໄດ້ແກ່ 1) ຫຼັກການແນວຄິດທັກສະພື້ນໂດຍກຳນົດດ້ວຍຜູ້ພັດທະນາຮູບແບບ. 2) ວັດຖຸປະສົງ. 3) ກິດຈະກຳການຮຽນການສອນ ເຊິ່ງປະກອບດ້ວຍຮູບ

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

ແບບກິດຈະກຳການຮຽນຮູ້ ເຊິ່ງມີຂະບວນການຮຽນຮູ້ 5 ຂັ້ນຕອນ ໄດ້ແກ່ ຂັ້ນທີ 1. ທົບທວນວັນນະສິນ, ຂັ້ນທີ 2 ຍົນຍົນເນື້ອຫາ, ຂັ້ນທີ 3. ນຳພາຄວາມຄິດ, ຂັ້ນທີ 4. ພິນິດຣີ້ຄຳ, ຂັ້ນທີ 5. ສະຫຼຸບທຳຄວາມເຂົ້າໃຈ. 4) ການປະເມີນຜົນ.

ປະສິດທິຜົນຂອງຮູບແບບທີ່ເປັນຜົນມາຈາກການທົດລອງໃຊ້ຮູບແບບການຮຽນຮູ້ພົບວ່າ ຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິດທີ່ຮຽນຮູ້ດ້ວຍຮູບແບບການຮຽນຮູ້ໂດຍໃຊ້ RUCES MOEDL ຫຼັງການທົດລອງສູງກວ່າກ່ອນການທົດລອງຢ່າງມີຄວາມສຳຄັນທາງສະຖິຕິລະດັບ 05. ຄວາມເພິ່ງພໍໃຈຂອງນັກສຶກສາປະລິນຍາບັນດິດທີ່ມີຕໍ່ຮູບແບບການຮຽນຮູ້ ເພື່ອສ້າງເສີມຄວາມສາມາດໃນການອ່ານຕີຄວາມຂອງນັກສຶກສາປະລິນຍາບັນດິດໂດຍໃຊ້ RUCES MOEDL ພົບວ່ານັກສຶກສາມີຄວາມເພິ່ງພໍໃຈຕໍ່ຮູບແບບການຮຽນຮູ້ໂດຍລວມຢູ່ໃນລະດັບຫຼາຍທີ່ສຸດ.

## 6. ສະຫຼຸບຜົນ

ການວິໄຈນີ້ມີຈຸດປະສົງເພື່ອສຶກສາຜົນຂອງການນຳໃຊ້ເຕັກນິກສະແດງບົດບາດສົມມຸດໃນການສອນຕີຄວາມໝາຍບົດເລື່ອງ ວິຊາວັນນະຄະດີລາວ ສຳລັບນັກສຶກສາຄູພາສາລາວ-ວັນນະຄະດີ ປີທີ 2 ໂດຍນຳໃຊ້ບົດເລື່ອງ "ນາງມະໂລງ ທ້າວບາຈຽງ" ແລະ "ກຳພ້າຜີນ້ອຍ" ເປັນເນື້ອໃນການຮຽນຮູ້. ຜົນການສຶກສາພົບວ່າ ກ່ອນການຈັດການຮຽນການສອນ ນັກສຶກສາມີຄະແນນສະເລ່ຍດ້ານການຕີຄວາມໝາຍບົດເລື່ອງເທົ່າກັບ 4.92 ຄະແນນ ຢູ່ໃນລະດັບອ່ອນ. ຫຼັງຈາກນຳໃຊ້ເຕັກນິກສະແດງບົດບາດສົມມຸດ ຄະແນນສະເລ່ຍຂອງນັກສຶກສາເພີ່ມຂຶ້ນເປັນ 7.92 ຄະແນນ ຢູ່ໃນລະດັບດີ ມີຄະແນນຄວາມກ້າວໜ້າສະເລ່ຍ 3.00 ຄະແນນ ແລະ ຄ່າຜັນປ່ຽນມາດຖານ (SD) ເທົ່າກັບ 0.73. ຜົນດັ່ງກ່າວສະແດງໃຫ້ເຫັນວ່າ ເຕັກນິກສະແດງບົດບາດສົມມຸດສາມາດພັດທະນາຄວາມສາມາດໃນການຕີຄວາມໝາຍບົດເລື່ອງຂອງນັກສຶກສາໄດ້ຢ່າງມີປະສິດທິຜົນ. ນອກຈາກນີ້ ຜົນການສຳຫຼວດຄວາມເພິ່ງພໍໃຈຂອງນັກສຶກສາພົບວ່າ ນັກສຶກສາມີຄວາມເພິ່ງພໍໃຈໃນລະດັບສູງຫາສູງທີ່ສຸດທັງດ້ານເນື້ອໃນ ແລະ ດ້ານກິດຈະກຳການຮຽນການສອນ. ນັກສຶກສາເຫັນວ່າ ເນື້ອໃນການຮຽນມີຄວາມເໝາະສົມ, ລຽງລຳດັບຈາກງ່າຍໄປຫາຍາກ ແລະ ເຊື່ອມໂຍງກັບຊີວິດປະຈຳວັນ. ສ່ວນດ້ານກິດຈະກຳການຮຽນການສອນ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຮຽນເປັນກຸ່ມ, ການແລກປ່ຽນຄວາມຮູ້, ການມີສ່ວນຮ່ວມໃນການສະແດງຄວາມຄິດເຫັນ ແລະ ບັນຍາກາດການຮຽນຮູ້ທີ່ຄູຜູ້ສອນສ້າງຂຶ້ນ. ດັ່ງນັ້ນ ການນຳໃຊ້ເຕັກນິກສະແດງບົດບາດສົມມຸດ ຈຶ່ງເປັນແນວທາງທີ່ ເໝາະສົມໃນການພັດທະນາທັກສະການຕີຄວາມໝາຍບົດເລື່ອງ ແລະ ຍົກລະດັບຜົນສຳເລັດທາງການຮຽນຂອງນັກສຶກສາຄູວິຊາພາສາລາວ-ວັນນະຄະດີໄດ້ຢ່າງມີໃນສຳຄັນ.

## 7. ຂໍ້ສະເໜີແນະ

1) ການສອນຕີຄວາມໝາຍບົດເລື່ອງຄູຄວນດຳເນີນໄປຕາມຫຼັກການ, ວິທີ ແລະ ຂັ້ນຕອນ.

2) ຄູຜູ້ສອນຕີຄວາມໝາຍບົດເລື່ອງຕ້ອງໄດ້ເຊື່ອມໂຍງຄວາມຮູ້ໃໝ່ ແລະ ຄວາມຮູ້ເກົ່າໃຫ້ແກ່ນັກຮຽນ.

3) ການສອນຕີຄວາມໝາຍບົດເລື່ອງຄູສອນຕ້ອງມີວິທີສອນ ແລະ ກິດຈະກຳການສອນທີ່ຫຼາກຫຼາຍ ເພື່ອໃຫ້ນັກຮຽນໄດ້ຮຽນຮູ້ການວິເຄາະທີ່ຖືກຕ້ອງຕາມວິທີ ໂດຍສະເພາະແມ່ນໃຫ້ນັກສຶກສາໄດ້ປະຕິບັດຕົວຈິງ/ສະແດງບົດບາດສົມມຸດ.

ການຄົ້ນຄວ້າຄັ້ງຕໍ່ໄປອາດລົງເລິກສອບຖາມປັດໃຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ມີຕໍ່ການຈັດການຮຽນການສອນ ວິຊາວັນນະຄະດີລາວ ເປັນໃນຮູບແບບຂອງການສຳພາດ ຫຼື ການໃຫ້ນັກຮຽນສະແດງຄວາມຄິດເຫັນແດ່ກໍໄດ້ ຫຼື ອາດຈະລອງປຽບທຽບປັດໃຈທີ່ສົ່ງຜົນຕໍ່ການຮຽນຂອງນັກຮຽນທີ່ມີຕໍ່ການຮຽນວິຊາວັນນະຄະດີລາວກັບວິຊາອື່ນໆ ເພື່ອທີ່ຈະເກັບກຳຂໍ້ມູນເພື່ອເປັນປະໂຫຍດໃນການພັດທະນາການຮຽນ-ການສອນຕໍ່ໄປ.

## 8. ຂໍ້ຈຳກັດຂອງການຄົ້ນຄ້ວາ

1. ເນື່ອງຈາກວ່າການສຶກສາກ່ຽວກັບການຕີຄວາມໝາຍບົດເລື່ອງໃນວັນນະຄະດີລາວ ແມ່ນການສຶກສາແບບປະລິມານ ໂດຍໃຊ້ການອະທິບາຍ ວິເຄາະ ແລະ ຍົກຕົວຢ່າງມາປະກອບເປັນການສຶກສາທີ່ຕ້ອງການຜົນໄດ້ຮັບເປັນເນື້ອໃນໃຈຄວາມ ຈຶ່ງມີຂໍ້ຈຳກັດທາງດ້ານເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງ ທີ່ເປັນພາສາລາວຍັງບໍ່ຫຼາຍ.

2. ໃນການສຶກສາຜ່ານມາຫົວຂໍ້ນີ້ຍັງບໍ່ມີຜູ້ຮຽນຫຼາຍຈຶ່ງເຮັດໃຫ້ການຊອກຫາຂໍ້ມູນຈຳກັດ.

## 9. ເອກະສານອ້າງອີງ

ຄຳສິງ ທະວິສຸກ ພ້ອມຄະນະ. (2021). *ແບບຮຽນພາສາລາວຊັ້ນປະຖົມສຶກສາປີທີ 3 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.*

ຄຳສິງ ທະວິສຸກ ພ້ອມຄະນະ. (2021). *ຄູ່ມືຄູພາສາລາວຊັ້ນປະຖົມສຶກສາປີທີ 3 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.*

P-ISSN:3078-5405; E-ISSN: 3080-2628
DOI: https://doi.org/10.71026/jlste.136

ແອງທິລາດ ຫຼ້າອຸ່ນແກ້ວ. (2019). *ເອກະສານປະກອບບັນຍາຍການສອນພາສາລາວວັນນະຄະດີສາຍຄູແບບຮຽນຫຼັກສູດການສອນປະຖົມ*

Yodvilavong, C. (2024). *ໜັງສືພິມສະບາຍດີເມືອງລາວ ປະຫວັດຄວາມເປັນມາຂອງພາສາລາວແບບຮຽນພາສາລາວ ຊັ້ນມັດທະຍົມສຶກສາປີທີ 5*

Bupphachat, N., & Cheep-Aranai, R. I. N. (2019). *The Use Of Role Play To Improve Speaking Skills For Communication Of Fourth-Grade Students Of Joseph Upatham School, Sampran, Nakhon Pathom.*

Chantamat, S. (2022). Using Role-Playing Activities For Students' Chinese Speaking Skills Improvement In The Chinese Language Teaching Program, Faculty Of Education, Chiang Rai Rajabhat University. *Journal Of Education Burapha*, *33*(1), 72-85.

Choihiran, P., & Buasomboon, B. (2021). *The Development Of Learning Model For Enhanc The Reading Ability Of Undergraduate Students Using Ruces Model* (Doctoral Dissertation, Silpakorn University).

Sophon, N., & Thongsorn, P. (2023). *Effects Of Learning Activities Based On Role Play Activities With Peer Learning Assistant On Learning Achievement Communication Skills And Attitude Towards Japanese Of Mattayom 3 Students* (Doctoral Dissertation, Burapha University).